ບໍລິສັດ ລາວອາໂກຣເທັກ ມະຫາຊົນ ແລະ ບໍລິສັດ ໃນເຄືອ

ເອກະສານລາຍງານການເງິນສັງລວມກິດຈະການໂດຍຫຍໍ້ (ທົບທວນຄືນ)

ສຳລັບໄຕມາດ 03 ປີ 2024

ສາລະບານ *ໜ້າ*

ໃບລາຍງານຖານະການເງິນສັງລວມກິດຈະການ	1
ໃບລາຍງານຜົນໄດ້ຮັບສັງລວມກິດຈະການ	2
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສັງລວມກິດຈະການ	3
ໃບລາຍງານກະແສເງິນສົດສັງລວມກິດຈະການ	4
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສັງລວມກິດຈະການໂດຍຫຍໍ້	5-10

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ ແລະ ບໍລິສັດໃນເຄືອ
ໃບລາຍງານຖານະການເງິນສັງລວມກິດຈະການ
ສິ້ນສຸດ ວັນທີ 30 ກັນຍາ 2024

	ບົດອະທິບາຍ	ທີ່ບທວນຄືນ 30 ກັນຍາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	3	1,947,177,211	14,386,401,761
ໜີ້ຕ້ອງຮັບການຄ້າ ແລະໜີ້ຕ້ອງຮັບອື່ນໆ, ສຸດທິ		7,900,890,778	8,889,151,023
ເຄື່ອງໃນສາງ, ສຸດທິ		2,075,973,495	1,581,590,036
ວັດສະດຸສະໜອງ, ສຸດທິ		3,074,495,683	2,668,342,495
ຄ່າເຍື່ອນຊຳລະຕົ້ນທຶນການປູກເບ້ຍປາມເພື່ອຂາຍ		347,222,072	750,013,038
ຊັບສິນໝຸນວຽນອື່ນໆ		6,225,772,185	4,166,183,828
ລວມຊັບສິນໝຸນວຽນ		**21,571,531,424**	**32,441,682,181**
ຊັບສິນບໍ່ໝຸນວຽນ			
ຊັບສິມບັດຄົງທີ່ ມີຕົວຕົນ, ສຸດທິ	4	20,121,162,263	17,842,373,695
ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກ ຕົ້ນປາມ, ສຸດທິ	5	18,569,227,416	23,150,662,402
ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກ ຕົ້ນຫຍີ້ນ້ຳ	6	6,185,955,249	1,967,158,504
ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກ ຕົ້ນກະຖິນນາລິງ	7	7,016,291,525	1,319,982,827
ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກ ມັນຕົ້ນ	8	125,462,226	(-)
ລວມຊັບສິນບໍ່ໝຸນວຽນ		**52,018,098,679**	**44,280,177,428**
ລວມຊັບສິນ		**73,589,630,103**	**76,721,859,609**
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		10,662,775,010	10,774,298,484
ໜີ້ສິນໝຸນວຽນອື່ນໆ		50,430,744	20,743,266
ເງິນກູ້ຢືມໄລຍະສັ້ນ	9	2,000,000,000	2,000,000,000
ໜີ້ຕ້ອງສົ່ງຈາກການເຊົ່າຊື້ໝຸນວຽນ		894,010,000	1,088,782,267
ລວມໜີ້ສິນໝຸນວຽນ		**13,607,215,754**	**13,883,824,017**
ໜີ້ສິນບໍ່ໝຸນວຽນ			
ໜີ້ສິນບໍ່ໝຸນວຽນອື່ນໆ		18,223,424,449	18,223,424,449
ລວມໜີ້ສິນບໍ່ໝຸນວຽນ		**18,223,424,449**	**18,223,424,449**
ລວມໜີ້ສິນ		**31,830,640,203**	**32,107,248,466**
ທຶນເຈົ້າຂອງ			
ທຶນຈົດທະບຽນ		50,000,000,000	50,000,000,000
ສ່ວນເພີ່ມຂອງທຶນ		3,269,466,406	3,269,466,406
ກຳໄລສະສົມ			
ຄັງສະສົມຕາມລະບຽບການ		932,158,245	932,158,245
ກຳໄລສະສົມລໍຖ້າແບ່ງປັນ		(12,442,634,751)	(9,587,013,508)
ລວມທຶນເຈົ້າຂອງ		**41,758,989,900**	**44,614,611,143**
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**73,589,630,103**	**76,721,859,609**

ທ່ານ ຝົງຖານ ພົດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 06 ພະຈິກ 2024

ທ່ານ ວັນສະໜຶມ ສີສຸຕີມັງ
ຫົວໜ້າບັນຊີ - ການເງິນ
ວັນທີ: 06 ພະຈິກ 2024

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 5 - 10 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ ແລະ ບໍລິສັດໃນເຄືອ
ໃບລາຍງານຜົນໄດ້ຮັບສັງລວມກິດຈະການ
ສຳລັບໄລຍະ 3 ເດືອນສິ້ນສຸດ 30 ກັນຍາ 2024

	ບົດອະທິບາຍ	ທົບທວນຄືນ 30 ກັນຍາ 2024 ກີບ	ທົບທວນຄືນ 30 ກັນຍາ 2023 ກີບ
ລາຍຮັບຈາກການຂາຍ ແລະ ການບໍລິການ		9,183,835,332	8,892,570,441
ຕົ້ນທຶນໃນການຂາຍ ແລະ ການບໍລິການ		(6,611,606,177)	(6,801,552,001)
ກຳໄລ ລວມ		**2,572,229,155**	**2,091,018,440**
ລາຍຈ່າຍການຂາຍ ແລະ ບໍລິຫານ		(3,446,343,809)	(2,643,965,437)
ລາຍຮັບອື່ນໆ		369,932,475	562,493,217
ຂາດທຶນ/ກຳໄລ ຈາກອັດຕາແລກປ່ຽນ		658,058,032	(725,110,425)
ກຳໄລຈາກການດຳເນີນງານ		**153,875,853**	**(715,564,205)**
ລາຍຈ່າຍທາງການເງິນ		(53,488,778)	(46,090,770)
ກຳໄລຈາກການດຳເນີນງານກ່ອນອາກອນກຳໄລ		**100,387,075**	**(761,654,975)**
ອາກອນກຳໄລ			
ກຳໄລສຸດທິສຳລັບງວດ		**100,387,075**	**(761,654,975)**
ກຳໄລຕໍ່ຮຸ້ນ			
ກຳໄລສຸດທິຕໍ່ຮຸ້ນ	10	1.00	(7.62)

ທ່ານ ພິງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 06 ພະຈິກ 2024

ທ່ານ ວັນສະເຫຼີມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 06 ພະຈິກ 2024

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 5 - 10 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

			ກຳໄລສະສົມ		
	ທຶນຈົດທະບຽນ	ສ່ວນເພີ່ມມູນຄ່າຮຸ້ນ	ຄ້າງສະສົມຕາມລະບຽບການ	ກຳໄລສະສົມ ຈຳຖ້າ ແບ່ງປັນ	ລວມ
	ກີບ	ກີບ	ກີບ	ກີບ	ກີບ
ຍອດຍົກມາ ໃນວັນທີ 01 ກໍລະກົດ 2023	50,000,000,000	3,269,466,406	932,158,245	(3,933,244,095)	50,268,380,556
ສ່ວນເພີ່ມມູນຄ່າຮຸ້ນ	-	-	-	-	-
ກຳໄລ/ຂາດ ສຸດທິໃນປີ	-	-	-	(761,654,975)	(761,654,975)
ຄ້າງສະສົມຕາມລະບຽບການ	-	-	-	-	-
ຍອດເຫຼືອທ້າຍປີ ວັນທີ 30 ກັນຍາ 2023	50,000,000,000	3,269,466,406	932,158,245	(4,694,899,070)	49,506,725,581
ຍອດຍົກມາ ໃນວັນທີ 01 ກໍລະກົດ 2024	50,000,000,000	3,269,466,406	932,158,245	(12,543,021,826)	41,658,602,825
ສ່ວນເພີ່ມມູນຄ່າຮຸ້ນ	-	-	-	-	-
ກຳໄລ/ຂາດ ສຸດທິໃນປີ	-	-	-	100,387,075	100,387,075
ຄ້າງສະສົມຕາມລະບຽບການ	-	-	-	-	-
ຍອດເຫຼືອທ້າຍປີ ວັນທີ 30 ກັນຍາ 2024	50,000,000,000	3,269,466,406	932,158,245	(12,442,634,751)	41,758,989,900

ທ່ານ ພົງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 06 ພະຈິກ 2024

ທ່ານ ວັນສະເຫຼີມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 06 ພະຈິກ 2024

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 5 - 10 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ ແລະ ບໍລິສັດໃນເຄືອ
ໃບລາຍງານກະແສເງິນສົດລວມກິດຈະການ
ສຳລັບໄລຍະ 3 ເດືອນສິ້ນສຸດ 30 ກັນຍາ 2024

	ບົດອະທິບາຍ	ທົບທວນຄືນ 30 ກັນຍາ 2024 ກີບ	ທົບທວນຄືນ 30 ກັນຍາ 2023 ກີບ
ກຳໄລກ່ອນເສຍອາກອນ		**100,387,075**	**(761,654,975)**
ລາຍການປັບປຸງ:			
ຄ່າໝູນໃຊ້		481,784,929	580,106,571
ຄ່າຕັດຖອນ		236,282,557	236,282,557
ຂາດທຶນຈາກອັດຕາແລກປ່ຽນ		(71,418,657)	327,837,252
ລາຍຈ່າຍອັດຕາດອກເບ້ຍ		53,488,778	46,090,770
ການປ່ຽນແປງໃນ ທຶນໝຸນວຽນ:			
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(245,763,633)	90,118,551
ເຄື່ອງໃນສາງ. ສຸດທິ		(442,058,870)	(260,006,747)
ວັດສະດຸສະໜອງ. ສຸດທິ		1,224,681,532	81,035,886
ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ-ເບ້ຍປາມເພື່ອຂາຍ		131,389,579	(10,067,842)
ຊັບສິນໝຸນວຽນອື່ນໆ		729,659,928	(1,072,746,012)
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		(3,573,050,263)	(542,994,861)
ໜີ້ສິນໝຸນວຽນອື່ນໆ		3,474,363	84,801,871
ໜີ້ຕ້ອງສົ່ງຈາກການເຊົ່າຊື້ໝຸນວຽນ			(105,624,341)
ກະແສເງິນສົດຈາກກິດຈະກຳດຳເນີນງານ		**(1,371,142,682)**	**(1,306,821,320)**
ດອກເບ້ຍ		(53,488,778)	(46,090,770)
ອາກອນລາຍໄດ້			
ເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**(1,424,631,460)**	**(1,352,912,090)**
ກະແສເງິນສົດຈາກກິດຈະກຳການລົງທຶນ			
ຊື້ຊັບສິນບັດຄົງທີ່		(588,392,122)	(187,782,786)
ຈ່າຍຄ່າຕົ້ນທຶນການປູກຕົ້ນປາມ		(661,448,487)	(262,885,527)
ຈ່າຍຄ່າຕົ້ນທຶນການປູກຕົ້ນຫຍີ່ປ້ຳ		(1,934,397,260)	
ຈ່າຍຄ່າຕົ້ນທຶນການປູກຕົ້ນກະຖິນນາລິງ		(56,948,533)	
ຈ່າຍຄ່າຕົ້ນທຶນການປູກມັນຕົ້ນ		(125,462,226)	
ເງິນສົດໃຊ້ສຸດທິ ໃນກິດຈະກຳການລົງທຶນ		**(3,366,648,628)**	**(450,668,313)**
ກະແສເງິນສົດຈາກກິດຈະກຳປະກອບທຶນ			
ເງິນສົດຮັບຈາກການກູ້ຢືມ	9	2,000,000,000	3,506,000,000
ຈ່າຍເງິນຄືນຈາກການເງິນກູ້ຢືມ	9	(2,000,000,000)	(4,020,000,000)
ຈ່າຍຕົ້ນທຶນຄືນຈາກການເຊົ່າຊື້		-	(105,624,341)
ເງິນສົດໃຊ້ສຸດທິໃນກິດຈະກຳການເງິນ		-	**(619,624,341)**
ເພີ່ມຂຶ້ນ/(ຫຼຸດລົງ)ສຸດທິ ຂອງເງິນສົດ ແລະ ລາຍການ ທຽບເທົ່າເງິນສົດ		**(4,791,280,088)**	**(2,423,204,743)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ຕົ້ນປີ		6,746,405,585	4,296,471,763
ກຳໄລ/(ຂາດທຶນ) ຈາກອັດຕາແລກປ່ຽນໃນ		(7,948,285)	129,913,413
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ທ້າຍງວດ	3	**1,947,177,211**	**2,003,180,432**
ໜີ້ຕ້ອງສົ່ງຈາກການຊື້ຊັບສິນບັດຄົງທີ່ ມີຕົ້ວຕົນ		1,795,343,365	1,910,709,070

ລາວ ອາໂກຣເທັກ ມະຫາຊົນ
Lao Agro Tech Public Company

ທ່ານ ພົງຖານ ຜິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 06 ພະຈິກ 2024

ທ່ານ ວັນສະໜຶ ສີສຸດຳມົ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 06 ພະຈິກ 2024

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 5 - 10 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ແລະ ບໍລິສັດໃນເຄືອ
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສັງລວມກິດຈະການໂດຍຫຍໍ້ (ທົບທວນຄືນ)
ສຳລັບໄລຍະ 3 ເດືອນ ສິ້ນສຸດ 30 ກັນຍາ 2024

1 ຂໍ້ມູນທົ່ວໄປ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ບໍລິສັດ) ແລະ ບໍລິສັດໃນເຄືອເຊິ່ງແມ່ນບໍລິສັດ ລາວດີກຣີນ ຈຳກັດຜູ້ດຽວ (ລວມກັນເປັນກຸ່ມບໍລິສັດ) ແມ່ນບໍລິສັດ ຈົດທະບຽນທີ່ສ້າງຕັ້ງຂຶ້ນ ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ("ສປປ ລາວ").
ມີສຳນັກງານຈົດທະບຽນຕັ້ງຢູ່ ບ້ານ: ໜອງຄັນຄູ, ເມືອງ ນາຊາຍທອງ, ນະຄອນຫຼວງວຽງຈັນ.
ກຸ່ມບໍລິສັດໄດ້ມີການຈຳໜ່າຍຮຸ້ນສາມັນຢູ່ໃນຕະຫຼາດຫຼັກຊັບລາວຄັ້ງທຳອິດໃນ ວັນທີ 25 ກັນຍາ 2017

ກິດຈະກຳຫຼັກຂອງກຸ່ມບໍລິສັດ ແມ່ນອຸດສາຫະກຳນ້ຳມັນປາມ ເຊິ່ງເລີ່ມຈາກການເພາະປູກເບ້ຍຕົ້ນປາມ (Palm), ປູກຕົ້ນປາມ, ຜະລິດ ແລະ ຈຳໜ່າຍຜະລິດຕະພັນປາມໂດຍກຸ່ມບໍລິສັດເອງ, ນອກຈາກນີ້ກຸ່ມບໍລິສັດຍັງສະໜອງເບ້ຍຕົ້ນປາມໃຫ້ປະຊາຊົນ ສຳລັບການເພາະປູກ ແລະ ເກັບຊື້ຄືນໝາກປາມ.

ນອກຈາກນີ້ ກຸ່ມບໍລິສັດ ຍັງໄດ້ນຳເຂົ້າສິນຄ້າສຳເລັດຮູບ ເຊັ່ນນ້ຳມັນປຸງແຕ່ງອາຫານ ແລະ ແປ້ງນົວ ຈາກປະເທດ ໄທ ເພື່ອຈຳໜ່າຍໃນ ສປປ ລາວ.

ກິດຈະກຳຫຼັກຂອງບໍລິສັດໃນເຄືອ ແມ່ນການປູກຕົ້ນໄມ້ກະຖິນນາລົງໃຫ້ມີຄຸນນະພາບ ແລະ ມີຄວາມຍືນຍົງເພື່ອເປັນຜະລິດຕະພັນພ້ອມສ້າງມູນຄ່າສູງສຸດໃນການສົ່ງອອກສູ່ຕະຫຼາດພາຍນອກ.

ບໍລິສັດມີໂຄງການໃນການດຳເນີນທຸລະກິດຕັ້ງຢູ່ເມືອງຕະໂອ້ຍ ແລະ ເມືອງສະໝ້ວຍ, ແຂວງສາລະວັນ,ສປປ ລາວ

ເອກະສານລາຍງານການເງິນສະບັບນີ້ ໄດ້ຮັບການຮັບຮອງໂດຍສະພາບໍລິຫານຂອງບໍລິສັດ ວັນທີ 06 ພະຈິກ 2024,

2 ພື້ນຖານໃນການກະກຽມບົດລາຍງານ

ເອກະສານລາຍງານການເງິນສະບັບນີ້ໄດ້ຖືກສ້າງຂຶ້ນໂດຍອີງຕາມນະໂຍບາຍການບັນຊີ ຂອງບໍລິສັດດັ່ງທີ່ໄດ້ອະທິບາຍໄວ້ໃນລາຍລະອຽດເພີ່ມເຕີມໃນເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ ປີ 2023. ເອກະສານລາຍງານການເງິນຫຼັກເຊັ່ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງຂອງທຶນຂອງຕົນເອງ ແລະ ໃບລາຍງານກະແສເງິນສົດ ຖືກນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີໂດຍປະຕິບັດຕາມລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.
ເອກະສານລາຍງານການເງິນສະບັບນີ້ ຄວນອ່ານຄູ່ກັບເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ 31 ທັນວາ 2023.
ໃນການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ການຄາດຄະເນ ແລະ ຕັ້ງຂໍ້ສົມມຸດທີ່ມີຜົນກະທົບຕໍ່ຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນ ໃນວັນທີຂອງເອກະສານລາຍງານການເງິນ, ລາຍຮັບ ແລະ ລາຍຈ່າຍໃນໄລຍະເວລາທີ່ລາຍງານ, ເຖິງແມ່ນວ່າການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການກະທຳໃນປະຈຸບັນກໍ່ຕາມ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການຄາດຄະເນເຫຼົ່ານັ້ນ.

3 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ສຳລັບໄລຍະ 3 ເດືອນສິ້ນສຸດ ວັນທີ 30 ກັນຍາ 2024 ກີບ	ສຳລັບໄລຍະ 3 ເດືອນສິ້ນສຸດ ວັນທີ 30 ກັນຍາ 2023 ກີບ
ເງິນສົດໃນມື	50,648,472	33,805,004
ເງິນຝາກໃນທະນາຄານທີ່ຮຽກເກັບ	1,896,528,739	1,969,375,428
	1,947,177,211	**2,2003,180,432**

ເງິນຝາກທະນາຄານລວມມີ 3 ສະກຸນເງິນ ແມ່ນມີ ສະກຸນກີບ, ບາດ ແລະ ໂດລາ ໃນບັນຊີເງິນຝາກກະແສລາຍວັນກັບທະນາຄານໃນປະເທດ ແລະ ທະນາຄານສາຂາຕ່າງປະເທດ.

4 ຊັບສິນຄົງທີ່ ມີຕົວຕົນ, ສຸດທິ

	ສຳລັບໄລຍະ 3 ເດືອນສິ້ນສຸດ ວັນທີ 30 ກັນຍາ 2024 ກີບ	ສຳລັບໄລຍະ 3 ເດືອນສິ້ນສຸດ ວັນທີ 30 ກັນຍາ 2023 ກີບ
ຍອດຍົກມາ	20,014,555,070	18,529,350,539
ເພີ່ມຂຶ້ນ	956,600,512	812,566,605
ຮັບເຂົ້າ/ຈ່າຍອອກ	(368,208,390)	(624,783,820)
ຄ່າຫຼຸ້ຍຫ້ຽນ	(481,784,929)	(580,106,571)
	20,121,162,263	**18,137,026,753**

5 ເຍື່ອນລໍຖ້າຕັດຕົ້ນທຶນການປຸກປ່າ, ສຸດທິ

	ສຳລັບໄລຍະ 3 ເດືອນສິ້ນສຸດ ວັນທີ 30 ກັນຍາ 2024 ກີບ	ສຳລັບໄລຍະ 3 ເດືອນສິ້ນສຸດ ວັນທີ 30 ກັນຍາ 2023 ກີບ
ຍອດຍົກມາ	18,144,061,486	23,314,755,019
ເພີ່ມຂຶ້ນ	661,448,487	347,945,477
ຮັບເຂົ້າ/ຈ່າຍອອກ		(85,059,949)
ຄ່າຫຼຸ້ຍຫ້ຽນ	(236,282,557)	(236,282,557)
	18,569,227,416	**23,341,357,990**

6 ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນຫຍີ່ນ້ຳ, ສຸດທິ

	ສຳລັບໄລຍະ 3 ເດືອນສິ້ນສຸດ ວັນທີ 30 ກັນຍາ 2024 ກີບ
ຍອດຍົກມາ	4,251,557,990
ເພີ່ມຂຶ້ນ	1,934,397,259
	6,185,955,249

ໃນໄລຍະ 3 ເດືອນ ສິ້ນສຸດວັນທີ 30 ກັນຍາ 2024, ບໍລິສັດໄດ້ປູກເພີ່ມຕົ້ນຫຍີ່ນ້ຳ ແລະ ມີຕົ້ນທຶນໃນການປູກຕົ້ນຫຍີ່ນ້ຳເພີ່ມຂຶ້ນເຊິ່ງລວມມີຄ່າບຸກເບີກທີ່ດິນ, ຄ່າແຮງງານ, ຄ່າປຸຍ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວຂ້ອງໂດຍກົງກັບການປູກຕົ້ນຫຍີ່ນ້ຳມູນຄ່າ 1,934,397,259 ກີບ

7 ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນກະຖິ່ນນາລິງ, ສຸດທິ

	ສຳລັບໄລຍະ 3 ເດືອນສິ້ນສຸດ ວັນທີ 30 ກັນຍາ 2024 ກີບ
ຍອດຍົກມາ	6,959,342,992
ເພີ່ມຂຶ້ນ	135,200,498
ຮັບເຂົ້າ/ຈ່າຍອອກ	(78,251,965)
	7,016,291,525

ໃນໄລຍະ 3 ເດືອນ ສິ້ນສຸດວັນທີ 30 ກັນຍາ 2024, ບໍລິສັດໄດ້ປູກເພີ່ມຕົ້ນກະຖິ່ນນາລິງ ແລະ ມີຕົ້ນທຶນໃນການປູກຕົ້ນກະຖິ່ນນາລິງເພີ່ມຂຶ້ນເຊິ່ງລວມມີຄ່າບຸກເບີກທີ່ດິນ, ຄ່າແຮງງານ, ຄ່າປຸຍ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວຂ້ອງໂດຍກົງກັບການປູກຕົ້ນກະຖິ່ນນາລິງມູນຄ່າ 135,200,498 ກີບ

8 ເຍື່ອນລໍຖ້າຕັດຕົ້ນທຶນການປຸກມັນຕົ້ນ, ສຸດທິ

	ສຳລັບໄລຍະ 3 ເດືອນສິ້ນສຸດ ວັນທີ 30 ກັນຍາ 2024 ກີບ
ຍອດຍົກມາ	
ເພີ່ມຂຶ້ນ	125,462,226
	125,462,226

ໃນໄລຍະ 3 ເດືອນ ສິ້ນສຸດວັນທີ 30 ກັນຍາ 2024, ບໍລິສັດໄດ້ປຸກເພີ່ມຕົ້ນມັນຕົ້ນ ແລະ ມີຕົ້ນທຶນໃນການປຸກມັນຕົ້ນເພີ່ມຂຶ້ນເຊິ່ງລວມມີຄ່າບຸກເບີກທີ່ດິນ, ຄ່າແຮງງານ, ຄ່າປຸ໋ຍ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວຂ້ອງໂດຍກົງກັບການປຸກມັນຕົ້ນມູນຄ່າ 125,462,226 ກີບ

9 ເງິນກູ້ຢືມໄລຍະສັ້ນ

	ສຳລັບໄລຍະ 3 ເດືອນສິ້ນສຸດ ວັນທີ 30 ກັນຍາ 2024 ກີບ	ສຳລັບໄລຍະ 3 ເດືອນສິ້ນສຸດ ວັນທີ 30 ກັນຍາ 2023 ກີບ
ຍອດຍົກມາ	2,000,000,000	2,000,000,000
ເພີ່ມຂຶ້ນ	2,000,000,000	3,506,000,000
ຊຳລະຄືນ	(2,000,000,000)	(4,020,000,000)
	2,000,000,000	**1,486,000,000**

ທາງບໍລິສັດໄດ້ມີການເຊັນສັນຍາກູ້ຢືມເງິນໄລຍະສັ້ນກັບທະນາຄານ ໄຊ່ງ່ອນ-ຮ່າໂນ້ຍລາວ ຈຳກັດ (SHB) ໃນອັດຕາດອກເບ້ຍ 12,00%ຕໍ່ປີ

10 ກຳໄລຕໍ່ຮຸ້ນ

ພື້ນຖານການຄິດໄລ່ກຳໄລ ຫຼື ຂາດທຶນຕໍ່ຮຸ້ນຄິດໄລ່ຈາກການແບ່ງກຳໄລໃຫ້ຜູ້ຖືຮຸ້ນດ້ວຍວິທີການສະເລ່ຍຂອງຈຳນວນຮຸ້ນສາມັນໃນລະຫວ່າງງວດ.

	ສຳລັບໄລຍະ 3 ເດືອນສິ້ນສຸດ ວັນທີ 30 ກັນຍາ 2024 ກີບ	ສຳລັບໄລຍະ 3 ເດືອນສິ້ນສຸດ ວັນທີ 30 ກັນຍາ 2023 ກີບ
ກຳໄລ/ຂາດທຶນ, ສຸດທິຂອງຜູ້ຖືຮຸ້ນ (ກີບ)	100,387,075	(761,654,975)
ຈຳນວນຮຸ້ນ ສະເລ່ຍຕາມຮຸ້ນສາມັນ (ຮຸ້ນ)	100,000,000	100,000,000
ກຳໄລຕໍ່ຮຸ້ນ (ກີບ)	1.00	(7.62)

11 ອາກອນກຳໄລ

ອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ບໍລິສັດ ມີພັນທະໃນການຊຳລະອາກອນກຳໄລ ໃນຮູບແບບຂອງອາກອນກຳໄລໃນອັດຕາແມ່ນ 20% ຂອງກຳໄລທາງອາກອນ. ນອກຈາກນີ້ ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ເຊິ່ງອີງຕາມລະບຽບຂອງຕະຫຼາດຫຼັກຊັບ ບໍລິສັດ ຈະໄດ້ຮັບສ່ວນຫຼຸດຕື່ນອີກ 5% ຈາກອັດຕາອາກອນກຳໄລປະຈຳປີ ເປັນເວລາ 4 ປີ ນັບຈາກປີທີ່ບໍລິສັດໄດ້ເຂົ້າຕະຫຼາດຫຼັກຊັບ ອີງຕາມກົດໝາຍວ່າດ້ວຍອາກອນຂອງ ສປປ ລາວ. ອັດຕາດັ່ງກ່າວແມ່ນໃຊ້ໄດ້ຈົນເຖິງວັນທີ 31 ທັນວາ 2021 ແລະ ອັດຕາ 20% ແມ່ນເລີ່ມນຳໃຊ້ຕັ້ງແຕ່ວັນທີ 01 ມັງກອນ 2022 ເປັນຕົ້ນໄປ.

ລະບົບອາກອນໃນ ສປປ ລາວ ແມ່ນຂ້ອນຂ້າງໃໝ່ ແລະ ມີອາກອນທີ່ຫຼາກຫຼາຍ ແລະ ມັກມີການດັດປັບກົດໝາຍເລື້ອຍໆ ຊຶ່ງມັນບໍ່ຈະແຈ້ງ. ຂັດແຍ້ງກັນ ແລະ ມີການຕີຄວາມໝາຍທີ່ແຕກຕ່າງກັນກັບທີ່ມີຢູ່ໃນໜ່ວຍງານໄລ່ລຽງອາກອນ ແລະ ຂອບເຂດອຳນາດສານ.ອາກອນອາດມີການທົບທວນ ແລະ ກວດສອບຄືນຈາກເຈົ້າໜ້າທີ່ຜູ້ເຊິ່ງສາມາດປັບໃໝ ແລະ ລົງໂທດ.

ປັດໃຈເຫຼົ່ານີ້ ອາດສ້າງຄວາມສ່ຽງທາງອາກອນໃນ ສປປ ລາວ ທີ່ມີສາລະສຳຄັນກວ່າປະເທດອື່ນໆ. ຜູ້ບໍລິຫານເຊື່ອວ່າໄດ້ຈັດກຽມຢ່າງພຽງພໍສຳລັບໜີ້ຕ້ອງສົ່ງອາກອນ ຕາມການຕີຄວາມຂອງກົດໝາຍສ່ວຍສາອາກອນ. ເຖິງຢ່າງໃດກໍ່ຕາມເຈົ້າໜ້າທີ່ທີ່ກ່ຽວຂ້ອງອາດມີການຕີຄວາມທີ່ແຕກຕ່າງກັນ ແລະ ຜົນກະທົບຂອງຄວາມແຕກຕ່າງດັ່ງກ່າວອາດມີສາລະສຳຄັນ.

12 ພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ຜ່ານໜຶ່ງ ຫຼື ຫຼາຍກຸ່ມ ຄວບຄຸມ ຫຼື ຖືກຄວບຄຸມ ໂດຍບໍລິສັດ ຫຼື ພາຍໃຕ້ການຄວບຄຸມທົ່ວໄປຂອງບໍລິສັດ ລວມທັງບໍລິສັດທີ່ເຮັດໜ້າທີ່ຖືຮຸ້ນ ບໍລິສັດຍ່ອຍ ແລະ ບໍລິສັດ ທີ່ກ່ຽວຂ້ອງກັບບໍລິສັດຍ່ອຍຖືເປັນບໍລິສັດໃນກຸ່ມດຽວກັນ ບຸກຄົນທີ່ເປັນເຈົ້າຂອງທາງກົງ ຫຼື ທາງອ້ອມ ທີ່ມີສ່ວນໄດ້ສ່ວນເສຍໃນບໍລິສັດ ແລະ ມີອິດທິພົນຫຼາຍຕໍ່ກັບບໍລິສັດ. ຜູ້ບໍລິຫານຫຼັກລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດໃນກຸ່ມ ກັບ ບຸກຄົນທີ່ກ່ຽວຂ້ອງເຫຼົ່ານີ້ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງສາຍສຳພັນ ທີ່ແທ້ຈິງ. ບໍ່ໄດ້ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

13 ເຫດການທີ່ເກີດຂຶ້ນໃນລະຫວ່າງມື້ທີ່ລາຍງານ

ບໍ່ມີເຫດການທີ່ເປັນສາລະສຳຄັນຫຼັງເອກະສານລາຍງານການເງິນ ທີ່ມີຜົນກະທົບທີ່ເປັນສາລະສຳຄັນຕໍ່ຕົວເລກ ໃນຂໍ້ມູນການເງິນ ຂອງບໍລິສັດ.